LAOS

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະນະທ່ານ ເລຂາທິການໃຫຍ່,

ຂ້າພະເຈົ້າ ຮູ້ສຶກເປັນກຽດທີ່ພະນະທ່ານໄດ້ແຈ້ງໃຫ້ ຂ້າພະເຈົ້າຊາບກ່ຽວກັບຄວາມຮູ້ສຶກຂອງເດັກນ້ອຍໃນທົ່ວໂລກຕໍ່ບັນຫາຢາເສບຕິດ ແລະ ຕໍ່ອະນາຄົດຂອງເຂົາເຈົ້າໃນສັດຕະວັດທີ່ຈະມາເຖິງ. ຂ້າພະເຈົ້າເຫັນວ່າ ຄວາມຮູ້ສຶກຂອງເຂົາແມ່ນຖືກຕ້ອງ ແລະ ເປັນທຳ.

ສຳລັບລັດຖະບານລາວແລ້ວ, ຕະຫຼອດໄລຍະຜ່ານມາກໍຄືໃນປະຈຸບັນ, ພວກຂ້າພະເຈົ້າໄດ້ເອົາໃຈໃສ່ໃຊ້ມາດຕະການຫລາຍດ້ານຕໍ່ບັນຫາຢາເສບຕິດໃນສັງຄົມ ໂດຍສະເພາະ ຜົນຮ້າຍຂອງມັນທີ່ມີຕໍ່ເດັກນ້ອຍເຊັ່ນ ການສຶກສາອົບຮົມໃນໂຮງຮຽນ ໃນຊຸມຊົນ ກໍຄືໃນຄອບຄົວ, ການສົ່ງເສີມໃຫ້ເດັກນ້ອຍເຂົ້າໃນການຈັດຕັ້ງຕາມເພດໄວຂອງເຂົາເຈົ້າ ເພື່ອຄວາມສະດວກໃນການເບິ່ງແຍງ ແລະ ກວດກາ, ການອອກລະບຽບກົດຫມາຍ ແລະອື່ນໆ. ຫມາກຜົນທີ່ໄດ້ ແມ່ນຫນ້າເພິ່ງພໍໃຈ.

ພວກຂ້າພະເຈົ້າຢືນຢັນວ່າ ຈະເຮັດທຸກສິ່ງຢ່າງຕາມຄວາມສາມາດ ເພື່ອເຮັດໃຫ້ຄົນລຸ້ນຫລັງຂອງລາວ ໄດ້ເຕີບໃຫຍ່ ແລະ ພັດທະນາໄປເລື້ອຍໆ ໂດຍປັດສະຈາກຢາເສບຕິດ ແລະ ຈະປະກອບສ່ວນຢ່າງຕັ້ງຫນ້າເຂົ້າໃນຄວາມພະຍາຍາມລວມ ຂອງວົງຄະນາຍາດສາກົນ ຕາມທິດທີ່ໄດ້ວາງອອກໃນກອງປະຊຸມສະໄຫມພິເສດຂອງສະມັດຊາໃຫຍ່ ສປຊ ໃນຫວ່າງແລ້ວນີ້.

ຂໍໃຫ້ ພະນະທ່ານ ຈົ່ງເຊື່ອໃນຄວາມຕັດສິນໃຈຂອງພວກຂ້າພະເຈົ້າ

ດ້ວຍຄວາມນັບຖືຢ່າງສູງ,

ວຽງຈັນ, ວັນທີ 19/ມິຖຸນາ/ 1998

ຄຳໄຕ ສີພັນດອນ

ປະທານປະເທດ

ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ